ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------000-------

ສຳນັກງານນາຍົກລັດຖະມົນຕີ                                   ເລກທີ 161/ນຍ

ນະຄອນຫຼວງວຽງຈັນ, ວັນທີ 15/09/2008

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງກິດຈະການ ແລະ ປ້ອງກັນຜົນກະທົບ ຕໍ່ຕະຝັ່ງ, ລະບົບນິເວດວິທະຍາ ຕາມແມ່ນ້ຳຂອງ ແລະ ນ້ຳເທືອງ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 6/05/2003;
- ອີງຕາມການສະເໜີ ຂອງລັດຖະມົນຕີວ່າການ ກະຊວງໂຍທາທິການ ແລະ ຂົນສົ່ງ, ສະບັບເລກທີ 4466/ຍທຂ, ລົງວັນທີ 2/04/2008.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1: ຈຸດປະສົງ

ດຳລັດສະບັບນີ້ ກຳນົດ ພາລະບົດບາດ, ໜ້າທີ່, ຂອບ ເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງຄະນະກຳມະການຄຸ້ມຄອງກິດຈະການ ແລະ ປ້ອງກັນຜົນ ກະທົບຕໍ່ຕະຝັ່ງ,

ລະບົບນິເວດວິທະຍາ ຕາມແມ່ນ້ຳຂອງ ແລະນ້ຳເຫືອງ ເພື່ອເປັນບ່ອນອີງ ໃນການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການດັ່ງກ່າວ ແນໃສ່ເຮັດໃຫ້ການຄຸ້ມຄອງກິດຈະການກໍ່ສ້າງຕ່າງໆ ຕາມແມ່ນ້ຳ, ການຂຸດຄົ້ນຫີນແຮ່, ຊາຍ ແລະ ດິນດາ ໄດ້ດຳເນີນໄປຢ່າງມີປະສິດທິຜົນ, ບໍ່ໃຫ້ກີດຂວາງການເດີນເຮືອ ຫຼື ຫຼີກເວັ້ນຜົນກະທົບຕໍ່ຕະຝັ່ງ, ຕໍ່ລະບົບນິເວດວິທະຍາ ແລະ ຮັກສາສິ່ງແວດລ້ອມຕ່າງໆ ຂອງທັງສອງຝັ່ງແມ່ນ້ຳຂອງ ແລະ ນ້ຳເຫືອງ.

ມາດຕາ 2: **ທີ່ຕັ້ງ ແລະ ພາລະບົດບາດ.**

ຄະນະກຳມະການຄຸ້ມຄອງກິດຈະການ ແລະ ປ້ອງກັນຜົນກະທົບຕໍ່ຕະຝັ່ງ, ລະບົບນິເວດວິທະຍາ ຕາມແມ່ນ້ຳຂອງ ແລະນ້ຳເຫືອງ ແມ່ນອົງການຈັດຕັ້ງຂອງລັດ ທີ່ບໍ່ປະຈຳການ ມີຊື່ຫຍໍ້ ວ່າ: **ຄປຂຫ** ຊຶ່ງຈັດຕັ້ງຂຶ້ນ ໂດຍແບ່ງອອກເປັນສອງຂັ້ນ ຄື: ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ.

ຄະນະກຳມະການ ປຂຫ ມີພາລະບົດບາດ ເປັນຜູ້ຊ່ວຍລັດຖະບານ ໃນການແນະນຳ, ຕິດຕາມ, ກວດກາ ແລະ ຊຸກຍູ້ບັນດາຂະແໜງການຂອງລັດ ທີ່ກ່ຽວຂ້ອງ ໃນການຄົ້ນຄວ້າຮ່າງລະບຽບການ, ແຜນຍຸດທະສາດ ແລະ ຂຶ້ນແຜນຈັດຕັ້ງປະຕິບັດກົດໝາຍ, ລະບຽບການ, ແຜນຍຸດທະສາດ ລວມທັງສັນຍາ, ສົນທິສັນຍາ ແລະ ຂໍ້ຕົກລົງລະຫວ່າງປະເທດ ກ່ຽວກັບການຄຸ້ມຄອງກິດຈະການຕ່າງໆ ທີ່ດຳເນີນຢູ່ຕາມແມ່ນ້ຳຂອງ ແລະ ນ້ຳເຫືອງ ນອກຈາກນີ້, ຄະນະກຳມະການ ປຂຫ ຍັງມີບົດບາດໃນການພົວພັນ, ປະສານງານ ແລະ ເຊັນສັນຍາ ຫຼື ຂໍ້ຕົກລົງກັບຕ່າງປະເທດ ກ່ຽວກັບການຄຸ້ມຄອງກິດຈະການຕ່າງໆ ຕາມລຳແມ່ນ້ຳທັງສອງນີ້ ຕາມການມອບໝາຍຂອງ ລັດຖະບານ.

## ໝວດທີ II

## ໜ້າທີ່ ແລະ ຂອບເຂດສິດ

## ຂອງຄະນະກຳມະການ ຄປຂທ ຂັ້ນສູນກາງ

### ມາດຕາ 3: ໜ້າທີ່

ຄະນະກຳມະການ ປຂທ ຂັ້ນສູນກາງ ມີໜ້າທີ່ຕົ້ນຕໍດັ່ງນີ້:

1. ຄົ້ນຄວ້າ, ຜັນຂະຫຍາຍແຜນຍຸດທະສາດ ດ້ານການຄຸ້ມຄອງກິດຈະການ ແລະປ້ອງກັນຜົນກະທົບຕໍ່ຕະຝັ່ງ, ລະບົບນິເວດວິທະຍາ ຕາມແມ່ນ້ຳຂອງ ແລະນ້ຳເຫືອງ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດເພື່ອແນະນຳ ແລະ ຊຸກຍູ້ໃຫ້ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ;
2. ໂຄສະນາ, ເຜີຍແຜ່ ແລະ ສະໜອງຂໍ້ມູນ, ຂ່າວສານ ກ່ຽວກັບວຽກງານຄຸ້ມຄອງກິດຈະການ ແລະ ການປ້ອງກັນຜົນກະທົບຕໍ່ຕະຝັ່ງ, ລະບົບນິເວດວິທະຍາ ຕາມແມ່ນ້ຳຂອງ ແລະ ນ້ຳເຫືອງ ໃຫ້ມວນຊົນ ແລະ ພາກສ່ວນຕ່າງໆ ທັງຢູ່ພາຍໃນ ແລະຕ່າງປະເທດ ໄດ້ຮັບຊາບຢ່າງກວ້າງຂວາງ;
3. ຂຶ້ນແຜນງົບປະມານປະຈຳປີ ນຳສະເໜີ ຕໍ່ກະຊວງໂຍທາທິການ ແລະ ຍົບສົ່ງພິຈາລະນາເອົາເຂົ້າໃນແຜນງົບປະມານລວມ ຂອງກະຊວງຕາມຂັ້ນຕອນ ທີ່ໄດ້ກຳນົດ ໃນກົດໝາຍວ່າດ້ວຍງົບປະມານແຫ່ງລັດ;
4. ຄຸ້ມຄອງທຶນ ທີ່ໄດ້ຮັບອະນຸມັດ ໃນການຈັດຕັ້ງປະຕິບັດແຜນການ, ແຜນງານ ແລະ ໂຄງການຕ່າງໆ ລວມທັງລາຍຮັບຈາກງົບປະມານແຫ່ງລັດ, ທຶນຮອນທີ່ໄດ້ຮັບ ຈາກການສະໜັບສະໜູນ ແລະ ຊ່ວຍ

ເຫຼືອ ເຂົ້າໃນວຽກງານຂອງຕົນ ພ້ອມທັງລາຍງານຜົນ ຂອງການຈັດຕັ້ງປະຕິບັດ ໃຫ້ລັດຖະບານຮັບຊາບ ໃນແຕ່ລະໄລຍະ ຕາມລະບຽບການ;

5. ສຶກສາ, ຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນ ຕໍ່ຮ່າງກົດໝາຍ ແລະ ນິຕິກຳຕ່າງໆທີ່ກ່ຽວຂ້ອງ ກັບວຽກງານຄຸ້ມຄອງກິດຈະການ ແລະ ປ້ອງກັນຜົນກະທົບຕໍ່ຕະຝັ່ງ, ລະບົບນິເວດວິທະຍາ ຕາມແມ່ນ້ຳຂອງ ແລະ ນ້ຳເຫືອງ ຊຶ່ງລວມມີການຄຸ້ມຄອງ ການຂຸດຄົ້ນຫີນແຮ່, ຊາຍ ແລະດິນດາ, ກິດຈະການກໍ່ສ້າງຕ່າງໆ ແລະ ບັນຫາອຸທົກກະໄພຂ້າມຜ່ານຊາຍແດນ ຕາມແມ່ນ້ຳຂອງ ແລະ ນ້ຳເຫືອງ ເພື່ອນຳສະເໜີລັດຖະບານພິຈາລະນາ;
6. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ4: ຂອບເຂດສິດ.**

**ຄະນະກຳມະການ ປຂທ ຂັ້ນສູນກາງ ມີສິດຕົ້ນຕໍດັ່ງນີ້:**

1. ພິຈາລະນາ, ຕົກລົງ, ຮັບຮອງເອົາແຜນການດຳເນີນງານ ຂອງຄະນະກຳມະການ ປຂທ ຂອງແຂວງ ແລະ ນະຄອນຫຼວງ;
2. ປະສານງານ, ຮ່ວມມືກັບອົງການສາກົນ ແລະ ຕ່າງປະເທດ ໂດຍສະເພາະ ແມ່ນຢູ່ໃນຂົງເຂດພາກພື້ນອາຊຽນ ແລະ ບັນດາປະເທດຢູ່ໃນອ່າງແມ່ນ້ຳຂອງ(GMS) ເພື່ອຍາດແຍ່ງການຊ່ວຍເຫຼືອ ດ້ານທຶນຮອນ, ບົດຮຽນ, ວິຊາການ, ເຕັກນິກ ແລະ ເຕັກໂນໂລຊີ ທີ່ທັນສະໄໝ;
3. ນຳໃຊ້ງົບປະມານປະຈຳປີ, ທຶນຮອນທີ່ໄດ້ຮັບ ຈາກການສະໜັບສະໜູນ ແລະ ຊ່ວຍເຫຼືອເຂົ້າໃນວຽກງານຂອງຕົນ ຢ່າງມີປະສິດທິຜົນ;
4. ເຊີນພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເຂົ້າຮ່ວມປະຊຸມ ເພື່ອປຶກສາຫາລື ແລະ ຄົ້ນຄວ້າແກ້ໄຂບັນຫາຕ່າງໆ ກ່ຽວກັບວຽກງານຄຸ້ມຄອງ

ກິດຈະການ, ປ້ອງກັນຜົນກະທົບຕໍ່ຕະຝັ່ງ ແລະ ລະບົບນິເວດວິທະຍາ ຕາມແມ່ນ້ຳຂອງ ແລະ ນ້ຳເຫືອງ ພ້ອມທັງແນະນຳ ພາກສ່ວນທີ່ກ່ຽວຂ້ອງອອກຂໍ້ຕົກລົງ, ຄຳສັ່ງ,ແຈ້ງການ ຫຼື ຄຳແນະນຳ ກ່ຽວກັບວຽກງານ ດັ່ງກ່າວ;

5. ອອກຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ ຫຼື ຄຳແນະນຳ ເພື່ອຈັດຕັ້ງປະຕິບັດລະບຽບກົດໝາຍ; ມະຕິ, ຄຳສັ່ງ ຂອງລັດຖະບານກ່ຽວກັບວຽກງານຄຸ້ມຄອງກິດຈະການ ແລະປ້ອງກັນຜົນກະທົບຕໍ່ຕະຝັ່ງ, ລະບົບນິເວດວິທະຍາ ຕາມແມ່ນ້ຳຂອງ ແລະ ນ້ຳເຫືອງ;
6. ຄົ້ນຄວ້າພິຈາລະນາ ກ່ຽວກັບການອະນຸມັດ ໂຄງການໃດໜຶ່ງ ຕາມລຳແມ່ນ້ຳຂອງ ແລະ ນ້ຳເຫືອງ ລວມທັງການຍົກເລີກ ຫຼືການຖອນກິດຈະການ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ຂອງໂຄງການດັ່ງກ່າວ, ຖ້າຫາກວ່າ ໄດ້ມີການລະເມີດລະບຽບ ກົດໝາຍ ຂອງ ສປປ ລາວ, ສັນຍາກັບຕ່າງປະເທດ ຫຼື ສົນທິສັນຍາ ລະຫວ່າງປະເທດ ກ່ຽວກັບການຄຸ້ມຄອງກິດຈະການຕ່າງໆ ຕາມແມ່ນ້ຳຂອງ ແລະ ນ້ຳເຫືອງ;
7. ປຸກລະດົມ, ຂົນຂວາຍປະຊາຊົນ, ບັນດາການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ໃຫ້ມີສ່ວນຮ່ວມ ໃນການຈັດຕັ້ງປະຕິບັດວຽກງານດ້ານການຄຸ້ມຄອງກິດຈະການ ແລະ ປ້ອງກັນຜົນກະທົບຕໍ່ຕະຝັ່ງ, ລະບົບນິເວດວິທະຍາ ຕາມແມ່ນ້ຳຂອງ ແລະ ນ້ຳ ເຫືອງ;
8. ປະຕິບັດສິດອື່ນໆ ທີ່ລັດຖະບານມອບໝາຍໃຫ້.

## ໝວດທີ III.

## ໜ້າທີ່ ແລະ ຂອບເຂດສິດ ຂອງຄະນະກຳມະການ ປຂຫ ຂັ້ນທ້ອງຖິ່ນ

### ມາດຕາ 5: ໜ້າທີ່

ຄະນະກຳມະການ ປຂຫ ຂັ້ນທ້ອງຖິ່ນ ມີໜ້າທີ່ຕົ້ນຕໍດັ່ງນີ້:

1. ຈັດຕັ້ງປະຕິບັດແຜນການ, ແຜນງານ ແລະໂຄງການຕ່າງໆ ກ່ຽວກັບ ວຽກງານຄຸ້ມຄອງກິດຈະການ ແລະ ປ້ອງກັນຜົນກະທົບຕໍ່ຕະຝັ່ງ, ລະບົບນິເວດວິທະຍາ ຕາມແມ່ນໍ້າຂອງ ແລະ ນໍ້າເຫືອງ ທີ່ຄະນະກໍາມະການ ປຂທ ຂັ້ນສູນກາງໄດ້ມອບໝາຍໃຫ້;
2. ເຜີຍແຜ່ລະບຽບກົດໝາຍ, ມະຕິ, ຄໍາສັ່ງ, ແຈ້ງການ ຫຼື ຄໍາແນະນໍາ ພ້ອມທັງປຸກລະດົມ, ຂົນຂວາຍປະຊາຊົນ, ບັນດາການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ທີ່ຢູ່ໃນແຂວງ, ນະຄອນຫຼວງຂອງຕົນ ເພື່ອໃຫ້ມີສ່ວນຮ່ວມ ໃນການຈັດຕັ້ງປະຕິບັດວຽກງານ ຄຸ້ມຄອງກິດຈະການ ແລະ ປ້ອງກັນຜົນກະທົບຕໍ່ຕະຝັ່ງ , ລະບົບນິເວດວິທະຍາ ຕາມແມ່ນໍ້າຂອງ ແລະ ນໍ້າເຫືອງ;
3. ເຊີນພາກສ່ວນຕ່າງໆທີ່ກ່ຽວຂ້ອງພາຍໃນແຂວງ,ນະຄອນຫຼວງ ເຂົ້າຮ່ວມປະຊຸມ ເພື່ອປຶກສາຫາລື ແລະ ຄົ້ນຄວ້າແກ້ໄຂບັນຫາຕ່າງໆ ກ່ຽວກັບວຽກງານຄຸ້ມຄອງກິດຈະການ ແລະ ປ້ອງກັນຜົນກະທົບຕໍ່ຕະຝັ່ງ ແລະລະບົບນິເວດວິທະຍາ ຕາມແມ່ນໍ້າຂອງ ແລະນໍ້າເຫືອງ;
4. ລາຍງານຜົນຂອງການດໍາເນີນງານ ໃນແຕ່ລະໄລຍະ ຂອງຄະນະກໍາມະການ ປຂທ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບ ຂອງແຂວງ, ນະຄອນຫຼວງ ໃຫ້ຄະນະກໍາມະການ ປຂທ ຂັ້ນສູນກາງ ຮັບຊາບ ຢ່າງເປັນປົກກະຕິ.

**ມາດຕາ 6: ຂອບເຂດສິດ.**

**ຄະນະກໍາມະການ ປຂທ ຂັ້ນທ້ອງຖິ່ນ ມີສິດຕົ້ນຕໍດັ່ງນີ້:**

1. ຊີ້ນໍາກອງເລຂາ ໃນການຈັດຕັ້ງປະຕິບັດວຽກງານຕ່າງໆ ຕາມໜ້າທີ່ ແລະ ຂອບເຂດສິດ ຂອງຄະນະກໍາມະການ ປຂທ ທີ່ຢູ່ພາຍໃນແຂວງ, ນະຄອນຫຼວງ ຂອງຕົນ;

2. ເປັນເຈົ້າການ ໃນການດຳເນີນການແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນແຕ່ລະໄລຍະ ກ່ຽວກັບວຽກງານດັ່ງກ່າວ ຢູ່ໃນຂອບເຂດທ້ອງຖິ່ນຂອງຕົນ ແລະລາຍງານຜົນ ຂອງການປະຕິບັດວຽກງານຕ່າງໆ ໃຫ້ຄະນະກຳມະການ ປຂທ ຂັ້ນສູນກາງຮັບຊາບຢ່າງເປັນປົກກະຕິ;
3. ເປັນຜູ້ລົງລາຍເຊັນ ກ່ຽວກັບເອກະສານສຳຄັນ ຂອງຄະນະກຳມະການ ປຂທ ຂັ້ນທ້ອງຖິ່ນ.

## ໝວດທີ IV.
## ໂຄງປະກອບການຈັດຕັ້ງ

**ມາດຕາ 7: ໂຄງປະກອບກົງຈັກ**

**ຂັ້ນສູນກາງ** : ຄະນະກຳມະການ ປຂທ ຂັ້ນສູນກາງ ມີກອງເລຂາຊ່ວຍວຽກ ຢູ່ກົມໂຍທາທິການທາງນ້ຳ, ກະຊວງໂຍທາທິການ ແລະ ຂົນສົ່ງ ໂດຍແມ່ນຫົວໜ້າກົມໂຍທາທິການທາງນ້ຳ ເປັນຫົວໜ້າກອງເລຂາ ແລະມີຫ້ອງການກອງເລຂາ ທີ່ປະກອບດ້ວຍພະນັກງານວິຊາການຊ່ວຍວຽກ ຈຳນວນໜຶ່ງ ຕາມຄວາມເໝາະສົມ.

**ຂັ້ນທ້ອງຖິ່ນ** : ຄະນະກຳມະການ ປຂທ ຂັ້ນທ້ອງຖິ່ນ ມີກອງເລຂາຊ່ວຍວຽກ ຢູ່ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ໂດຍແມ່ນຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ເປັນຫົວໜ້າກອງເລຂາ ແລະ ປະກອບດ້ວຍພະນັກງານວິຊາການຊ່ວຍວຽກ ຈຳນວນໜຶ່ງ.

**ມາດຕາ 8 : ໂຄງປະກອບດ້ານບຸກຄະລາກອນ**

ກ. **ຄະນະກຳມະການ ປຂທ ຂັ້ນສູນກາງ**

ຄະນະກຳມະການ ປຂທ ຂັ້ນສູນກາງ ໂດຍຕຳແໜ່ງປະກອບດ້ວຍ:

1. ລັດຖະມົນຕີວ່າການ ກະຊວງໂຍທາທິການ ແລະ ຂົນສົ່ງ

ເປັນປະທານ;

2. ລັດຖະມົນຕີຊ່ວຍວ່າການ ກະຊວງການຕ່າງປະເທດ ເປັນຮອງປະທານ;

3. ຮອງຫົວໜ້າອົງການ ຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ເປັນຮອງປະທານ;

4. ລັດຖະມົນຕີຊ່ວຍວ່າການ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຮອງປະທານ ທັງເປັນຜູ້ປະຈຳການ;

5. ປະທານຄະນະອານຸກຳມະການຮ່ວມມືຮັກສາຄວາມສະຫງົບຮຽບຮ້ອຍ ຕາມຊາຍແດນທົ່ວໄປລາວ-ໄທ ເປັນກຳມະການ;

6. ຫົວໜ້າຫ້ອງການກະຊວງໂຍທາທິການ ແລະ ຂົນສົ່ງ ເປັນກຳມະການ;

7. ຫົວໜ້າຫ້ອງການ ຄະນະກຳມາທິການຊາຍແດນແຫ່ງຊາດ, ກະຊວງຕ່າງປະເທດ ເປັນກຳມະການ;

8. ຫົວໜ້າກົມຊາຍແດນ ແລະ ແຜນທີ່, ກະຊວງປ້ອງກັນປະເທດ ເປັນກຳມະການ;

9. ຫົວໜ້າກົມແຜນທີ່ແຫ່ງຊາດ, ສຳນັກງານນາຍົກລັດຖະມົນຕີ ເປັນກຳມະການ;

10. ຫົວໜ້າກອງເລຂາຄະນະກຳມະການແມ່ນ້ຳຂອງແຫ່ງຊາດ ເປັນກຳມະການ;

11. ຫົວໜ້າກົມກົດໝາຍ, ກະຊວງຍຸຕິທຳ ເປັນກຳມະການ;

12. ຫົວໜ້າກົມບໍ່ແຮ່, ກະຊວງ ພະລັງງານ ແລະ ບໍ່ແຮ່ ເປັນກຳມະການ;

13. ຫົວໜ້າກົມຊົນລະປະທານ, ກະຊວງກະສິກຳ ແລະ ປ່າໄມ້ ເປັນກຳມະການ;

14. ຫົວໜ້າກົມງົບປະມານ, ກະຊວງການເງິນ ເປັນກຳມະການ;

15. ຫົວໜ້າກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ ເປັນກຳມະການ;

16. ຫົວໜ້າກົມຊັບພະຍາກອນນ້ຳ, ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ເປັນກຳມະການ;

17. ຫົວໜ້າກົມສິ່ງແວດລ້ອມ, ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດ ລ້ອມ ເປັນກຳມະການ;

18. ຫົວໜ້າກົມໂຍທາທິການທາງນ້ຳ, ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນກຳມະການ, ທັງເປັນຫົວໜ້າກອງເລຂາ.

## ຂ. ຄະນະກຳມະການ ປຂທ ຂັ້ນທ້ອງຖິ່ນ

ຄະນະກຳມະການ ປຂທ ຂັ້ນທ້ອງຖິ່ນ ໂດຍຕຳແໜ່ງ ກໍ່ຄື ຄປຂທ ຂອງບັນດາແຂວງ ແລະ ນະຄອນຫຼວງ ທີ່ມີຊາຍແດນທາງ ແມ່ນ້ຳຂອງ ແລະ ນ້ຳເຫືອງ ປະກອບດ້ວຍ:

1. ຮອງເຈົ້າແຂວງ/ຮອງເຈົ້າຄອງນະຄອນຫຼວງ ເປັນຫົວໜ້າ;
2. ຫົວໜ້າຫ້ອງວ່າການ ແຂວງ,ນະຄອນຫຼວງ ເປັນຮອງ;
3. ຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ ແຂວງ,ນະຄອນຫຼວງ ເປັນຄະນະ;
4. ຫົວໜ້າພະແນກ ຫຼື ຫ້ອງການຊັບພະຍາກອນນ້ຳ ແລະ ສິ່ງແວດ ລ້ອມແຂວງ, ນະຄອນຫຼວງ ເປັນຄະນະ;
5. ຫົວໜ້າກອງບັນຊາການ ປ້ອງກັນຊາດແຂວງ,ນະຄອນຫຼວງ ເປັນຄະນະ;
6. ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ເປັນຄະນະ;
7. ຫົວໜ້າພະແນກ ຫຼື ຫ້ອງການພົວພັນຕ່າງປະເທດແຂວງ, ນະຄອນຫຼວງ ເປັນຄະນະ;

8. ຫົວໜ້າພະແນກການເງິນແຂວງ, ນະຄອນຫຼວງ ເປັນຄະນະ;

9. ເຈົ້າເມືອງຂອງບັນດາເມືອງທີ່ມີຊາຍແດນທາງແມ່ນໍ້າຂອງ ແລະ ນໍ້າເຫືອງ ເປັນຄະນະ;

10. ຫົວໜ້າພະແນກ ຍທຂ ແຂວງ, ນະຄອນຫຼວງ ເປັນຄະນະ, ທັງເປັນຫົວໜ້າກອງເລຂາ.

## ໝວດທີ V.
## ລະບອບແບບແຜນ ວິທີເຮັດວຽກ

### ມາດຕາ 9: ແບບແຜນວິທີເຮັດວຽກ

ຄະນະກໍາມະການ ປຂທ ເຄື່ອນໄຫວວຽກງານ ຕາມຫຼັກການຕໍ່ໄປນີ້:

1. ທຸກການເຄື່ອນໄຫວຂອງຄະນະກໍາມະການ ປຂທ ແມ່ນຍຶດໝັ້ນຕາມແນວທາງນະໂຍບາຍຂອງພັກ ແລະ ແຜນຍຸດທະສາດ ຂອງລັດຖະບານ ໃນການຄຸ້ມຄອງກິດຈະການ ແລະ ປ້ອງກັນຜົນກະທົບຕໍ່ຕະຝັ່ງ, ລະບົບນິເວດວິທະຍາ ຕາມແມ່ນໍ້າຂອງ ແລະ ນໍ້າເຫືອງ;
2. ເຮັດວຽກຕາມຫຼັກການລວມສູນ ປະຊາທິປະໄຕບົນພື້ນຖານ ຄວາມເປັນເອກະພາບຂອງໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ, ເຮັດວຽກຢ່າງມີແຜນການ, ມີການສະຫຼຸບຕີລາຄາ, ຖອດຖອນບົດຮຽນ ແລະ ປະຕິບັດລະບອບສ່ອງແສງ, ລາຍງານຜົນຂອງການ ຈັດຕັ້ງປະຕິບັດວຽກງານຂອງຕົນ ໃນແຕ່ລະໄລຍະໃຫ້ລັດຖະບານ ຮັບຊາບ ຢ່າງເປັນປົກກະຕິ;
3. ຈັດກອງປະຊຸມສາມັນປີລະຄັ້ງ ເພື່ອສະຫຼຸບຖອດຖອນບົດຮຽນ ໃນການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງກິດຈະການ ແລະ ປ້ອງ ກັນຜົນກະທົບຕໍ່ຕະຝັ່ງ, ລະບົບນິເວດວິທະຍາ ຕາມແມ່ນໍ້າຂອງ ແລະ

ແມ່ນ້ຳຂອງ ແລະ ນ້ຳເຫືອງ ແລະ ເພື່ອນຳໃຊ້ ເຂົ້າໃນການບໍລິຫານ ວຽກງານປະຈຳວັນ ຊຶ່ງໄດ້ຮັບມາຈາກ ການຂຶ້ນແຜນຄາດຄະເນ ລາຍຈ່າຍນຳຮ່ວງ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ, ຈາກ ການຊ່ວຍເຫຼືອຂອງຕ່າງປະເທດ ແລະອົງການສາກົນ. ນອກຈາກນີ້, ຍັງອາດຈະໄດ້ ຮັບຈາກ ການປະກອບສ່ວນ ຂອງປະຊາຊົນທົ່ວໄປ ລວມທັງ ພາກທຸລະກິດຂອງລັດ ແລະ ເອກະຊົນ ໃນກິດຈະກຳ ຕ່າງໆ ທີ່ ຄປຂທ ຈັດຂຶ້ນ ເພື່ອລະດົມທຶນ.

ຄະນະກຳມະການ ປຂທ ລະດັບທ້ອງຖິ່ນ ກໍ່ມີງົບປະມານ ສະເພາະຂອງຕົນ ເພື່ອໃຊ້ຈ່າຍເຂົ້າໃນຈຸດປະສົງ ແລະ ເປົ້າໝາຍ ດັ່ງກ່າວມາຢູ່ຂ້າງເທິງນັ້ນ ຊຶ່ງໄດ້ຮັບ ຈາກການຂຶ້ນແຜນຄາດຄະເນ ລາຍຈ່າຍນຳຮ່ວງ ຂອງແຂວງ ແລະ ນະຄອນຫຼວງ.

**ມາດຕາ 11:ຕາປະທັບ.**

ຄະນະກຳມະການ ປຂທ ຂັ້ນສູນກາງ ນຳໃຊ້ຕາປະທັບ ຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ, ສ່ວນກອງເລຂາ ແມ່ນນຳໃຊ້ ຕາປະທັບ ຂອງກົມໂຍທາທິການທາງນ້ຳ, ກະຊວງໂຍທາທິການ ແລະ ຂົນສົ່ງ ເຂົ້າໃນວຽກງານທາງລັດຖະການ.

ຄະນະກຳມະການ ປຂທ ຂັ້ນທ້ອງຖິ່ນ ນຳໃຊ້ຕາປະທັບ ຂອງ ແຂວງ ແລະນະຄອນຫຼວງ, ສ່ວນກອງເລຂາ ແມ່ນນຳໃຊ້ຕາປະທັບ ຂອງພະແນກໂຍທາທິການ ແລະຂົນສົ່ງ ແຂວງ ແລະນະຄອນຫຼວງ.

**ມາດຕາ 12 : ການຈັດຕັ້ງປະຕິບັດ.**

- ມອບໃຫ້ປະທານຄະນະກຳມະການ ປຂທ ຂັ້ນສູນກາງ ເປັນຜູ້ ຊີ້ນຳ, ນຳພາ, ຜັນຂະຫຍາຍແບບແຜນວິທີເຮັດວຽກ ກໍ່ຄືອອກຂໍ້ຕົກ ລົງ ກຳນົດຢ່າງລະອຽດ ກ່ຽວກັບໜ້າທີ່ ແລະ ຂອບເຂດສິດ ຂອງ ຄະນະກຳມະການ ປຂທ ຂັ້ນສູນກາງ, ຂັ້ນທ້ອງຖິ່ນ ແລະ ຂອງກອງ

ເລຂາຄະນະກຳມະການດັ່ງກ່າວ ໂດຍສອດຄ່ອງ ກັບສະພາບການ ໃນແຕ່ລະໄລຍະ.

- ກະຊວງໂຍທາທິການ ແລະ ຂົນສົ່ງ, ບັນດາກະຊວງ, ອົງການ ທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ແລະທຸກພາກສ່ວນ ທີ່ກ່ຽວ ຂ້ອງຈົ່ງຮັບຮູ້, ໃຫ້ຄວາມສະດວກ ແລະ ປະສານສົມທົບກັນ ຈັດຕັ້ງ ປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 13 : ຜົນສັກສິດ.**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນ ຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງ ຂອງນາຍົກລັດຖະມົນຕີສະບັບ ເລກທີ 20/ນຍ ລົງວັນທີ 4/4/2003.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ ຖືກຍົກເລີກ.

**ນາຍົກລັດຖະມົນຕີແຫ່ງ ສ ປປ ລາວ**